# ສື່ການຮຽນການສອນຝຶກເວົ້າພາສາລາວ

ສື່ການຮຽນການສອນຝຶກເວົ້າພາສາລາວ ແມ່ນເພື່ອສະໜັບສະໜູນ
ນັກຮຽນທີ່ຍັງບໍ່ສາມາດເວົ້າພາສາລາວໄດ້ດີ ເມື່ອເລີ່ມເຂົ້າຮຽນຂັ້ນ ປ.1



# ພາບລວມ

- ກະຊວງສຶກສາທິການ ແລະ ກິລາ ໄດ້ຮັບຮູ້ເຖິງສິ່ງທ້າທາຍທີ່ເດັກຍັງບໍ່ສາມາດເວົ້າພາສາລາວໄດ້ດີ ໃນເວລາເລີ່ມເຂົ້າໂຮງຮຽນ. ສື່ການຮຽນການສອນຝຶກເວົ້າພາສາລາວ ແມ່ນບົດຮຽນເສີມເພື່ອຊ່ວຍນັກຮຽນຜູ້ທີ່ເວົ້າພາສາລາວບໍ່ທັນໄດ້ດີເມື່ອເຂົາເຈົ້າເລີ່ມຮຽນຂັ້ນ ປ.1.
- ສື່ການຮຽນການສອນຝຶກເວົ້າພາສາລາວ ໄດ້ຖືກພັດທະນາຂຶ້ນໂດຍກະຊວງສຶກສາທິການ ແລະ ກິລາ ແລະ ໄດ້ຮັບອະນຸມັດການຈັດຕັ້ງປະຕິບັດໃນທົ່ວປະເທດ.
- ເປັນຫຼັກສູດທີ່ໄດ້ສອນເພີ່ມເຕີມເຂົ້າໃນຫຼັກສູດວິຊາພາສາລາວທີ່ສອນໃນທົ່ວປະເທດ.
- ຈຸດສຸມຂອງສື່ການຮຽນການສອນຝຶກເວົ້າພາສາລາວ ແມ່ນການພັດທະນາທັກສະພາສາເວົ້າເພື່ອໃຫ້ນັກຮຽນສາມາດຮຽນຮູ້ການອ່ານ ແລະ ຂຽນພາສາລາວໄດ້ຢ່າງມີປະສິດທິພາບ ແລະ ເພື່ອໃຫ້ພວກເຂົາເຈົ້າສາມາດສື່ສານໃນທຸກວິຊາ ແລະ ບັນລຸຜົນການຮຽນທີ່ດີຂຶ້ນໃນທຸກວິຊາ.
- ສື່ການຮຽນການສອນຝຶກເວົ້າພາສາລາວ ບໍ່ໄດ້ກຳນົດໃຫ້ນັກຮຽນອ່ານ ຫຼື ຂຽນພາສາລາວ, ພຽງແຕ່ເວົ້າ ແລະ ຟັງເທົ່ານັ້ນ. ນັກຮຽນບໍ່ຄວນອ່ານ ຫຼື ຂຽນໃນລະຫວ່າງການຮຽນບົດຮຽນຝຶກເວົ້າພາສາລາວ.
- ສື່ການຮຽນການສອນດັ່ງກ່າວນຳໃຊ້ກິດຈະກຳ ແລະ ເກມທີ່ເນັ້ນເອົານັກຮຽນເປັນໃຈກາງເພື່ອຊຸກຍູ້ໃຫ້ນັກຮຽນສື່ສານເປັນພາສາລາວ. ໃນທຸກໆບົດຮຽນຝຶກເວົ້າພາສາລາວ, ນັກຮຽນຄວນຈະເວົ້າ ແລະ ປະຕິບັດຕົວຈິງຢ່າງຫ້າວຫັນໃນຫ້ອງຮຽນ. ຄາດວ່າບົດຮຽນຝຶກເວົ້າພາສາລາວຈະຟົດຟື້ນ ແລະ ມ່ວນຊື່ນ. ຄູບໍ່ຄວນຄາດຫວັງໃຫ້ນັກຮຽນນັ່ງງຽບໆໃນລະຫວ່າງການຮຽນບົດຮຽນເຫຼົ່ານີ້.
- ເວລາຄູສອນບົດຮຽນຝຶກເວົ້າພາສາລາວ ຈະຕ້ອງໃຊ້ວິທີການສອນແບບປະຕິບັດຕົວຈິງໃນເວລາສອນເພື່ອຮັບປະກັນວ່ານັກຮຽນທຸກຄົນມີສ່ວນຮ່ວມ. ພ້ອມນັ້ນ, ຄູຈະຕ້ອງສ້າງບັນຍາກາດທີ່ມ່ວນຊື່ນ ແລະ ເຮັດໃຫ້ນັກຮຽນທຸກຄົນສາມາດເຂົ້າຮ່ວມໄດ້.



# ສື່ການຮຽນການສອນຝຶກເວົ້າພາສາລາວສົ່ງເສີມການຮຽນວິຊາພາສາລາວຄືແນວໃດ?



- ແຕ່ລະບົດໃນສື່ການຮຽນການສອນຝຶກເວົ້າພາສາລາວ ແມ່ນທົບທວນຄືນເນື້ອໃນຂອງບົດຮຽນວິຊາພາສາລາວທີ່ຖືກສອນໄປຄຽງຄູ່ກັບບົດນັ້ນ ຫຼື ຖືກສອນໃນອາທິດກ່ອນ ຕົວຢ່າງ: ຖ້າຄູສອນບົດທີ 1 ຂອງວິຊາພາສາລາວໃນຕອນເຊົ້າ, ບົດຝຶກເວົ້າພາສາລາວ ບົດທີ 1 ໃນຕອນບ່າຍ ຈະທວນຄືນບາງເນື້ອໃນທີ່ສຳຄັນຈາກບົດຮຽນນັ້ນ ຫຼື ບົດຮຽນມາແລ້ວ.

- ເນື່ອງຈາກວ່າບົດຮຽນຝຶກເວົ້າພາສາລາວ ແລະ ບົດຮຽນວິຊາພາສາລາວສອດຄ່ອງກັນ, ຄູຕ້ອງສອນແຕ່ລະບົດຕາມລຳດັບ ແລະ ບໍ່ຄວນຂ້າມເນື້ອໃນ ຫຼື ກິດຈະກຳໃດໆ.



# ການປະເມີນ






ການປະເມີນເພື່ອສະຫຼຸບຜົນການຮຽນຈະບໍ່ມີຢູ່ໃນການສອນບົດຮຽນຝຶກເວົ້າພາສາລາວ. ນັກຮຽນໄດ້ຮັບຄະແນນສຳລັບທັກສະພາສາລາວໃນວິຊາພາສາລາວ.




ມີຄຳແນະນຳກ່ຽວກັບການປະເມີນເພື່ອປັບປຸງຜົນການຮຽນໃນປຶ້ມຄູ່ມືຄູ, ໃນພາກແນະນຳລວມ ແລະ ໃນແຜນການສອນ.

ຊົ່ວໂມງທີ 1

| ລ.ດ | ຊື່ ແລະ ນາມສະກຸນ | ຟັງ ແລະ ປະຕິບັດ | ການອອກສຽງ | ກິດຈະກຳການຝຶກ | ໝາຍເຫດ |
|---|---|---|---|---|---|
| 1 | ນາງລີ | 🙁 | 😐 | 😐 | |
| 2 | ທ້າວກີ | 😐 | 😐 | 😐 | |

ຊົ່ວໂມງທີ 2

| ລ.ດ | ຊື່ ແລະ ນາມສະກຸນ | ຟັງ ແລະ ປະຕິບັດ | ການອອກສຽງ | ກິດຈະກຳການຝຶກ | ໝາຍເຫດ |
|---|---|---|---|---|---|
| 1 | ນາງລີ | 🙁 😐 | 😐 🙂 | 😐 😐 | |
| 2 | ທ້າວກີ | 😐 🙂 | 😐 😐 | 😐 🙂 | |

ຊົ່ວໂມງທີ 3

| ລ.ດ | ຊື່ ແລະ ນາມສະກຸນ | ຟັງ ແລະ ປະຕິບັດ | ການອອກສຽງ | ກິດຈະກຳການຝຶກ | ໝາຍເຫດ |
|---|---|---|---|---|---|
| 1 | ນາງລີ | 🙁 😐 🙂 | 😐 🙂 🙂 | 😐 😐 🙂 | |
| 2 | ທ້າວກີ | 😐 🙂 🙂 | 😐 😐 🙂 | 😐 🙂 🙂 | |

ຄູຄວນປະຕິບັດການປະເມີນເພື່ອປັບປຸງການຮຽນໃນລະຫວ່າງການສອນຝຶກເວົ້າພາສາລາວ ເພື່ອເຂົ້າໃຈຄວາມຄືບໜ້າຂອງນັກຮຽນ ແລະ ວິທີການຊ່ວຍເຫຼືອເຂົາເຈົ້າ.

# ຕາຕະລາງການຮຽນ



ສື່ການຮຽນການສອນຝຶກເວົ້າພາສາລາວ ຄວນໄດ້ຮັບການສອນຢ່າງໜ້ອຍ 3 ຊົ່ວໂມງຕໍ່ອາທິດ ແຕ່ວ່າຄູສາມາດສອນ 4 ຫຼື 5 ຊົ່ວໂມງຕໍ່ອາທິດ ອີງຕາມຄວາມຕ້ອງການຂອງນັກຮຽນ ແລະ ສະຖານະການທ້ອງຖິ່ນ.



ໃນລະຫວ່າງຊົ່ວໂມງສອນຝຶກເວົ້າພາສາລາວ, ຄູອາດຈະໃຊ້ເກມຝຶກເວົ້າພາສາລາວ ຫຼື ທົບທວນກິດຈະກຳບົດຮຽນຝຶກເວົ້າພາສາລາວ.




ສື່ການຮຽນການສອນຝຶກເວົ້າພາສາລາວ ຄວນຖືກສອນຫຼັງຈາກບົດຮຽນປົກກະຕິ, ໃນລະຫວ່າງຊົ່ວໂມງກິດຈະກຳພິເສດ.



ຖ້າຄູບໍ່ສາມາດຈັດຕາຕະລາງຝຶກເວົ້າພາສາລາວໃນລະຫວ່າງຊົ່ວໂມງ "ກິດຈະກຳພິເສດ" ໃນອາທິດໃດໜຶ່ງ ຕົວຢ່າງວ່າມີກິດຈະກຳອື່ນທີ່ກຳນົດໃນເວລານັ້ນ, ບົດຝຶກເວົ້າພາສາລາວ ສາມາດສອນໃນເວລາອື່ນ, ຕາບໃດທີ່ບໍ່ມີຜົນກະທົບທາງລົບຕໍ່ການສອນວິຊາອື່ນໆ.



# ສື່ການຮຽນການສອນ

ສື່ການຮຽນການສອນຝຶກເວົ້າພາສາລາວ



- ປຶ້ມຄູ່ມືຄູຝຶກເວົ້າພາສາລາວ
- ປຶ້ມແບບຮຽນຝຶກເວົ້າພາສາລາວສຳລັບນັກຮຽນ ຂັ້ນ ປ.1
- ສື່ການຮຽນການສອນເສີມ (ບັດຮູບພາບ, ບັດເລື່ອງ ແລະ ບັດເກມ)





ຄູທີ່ຈະນຳໃຊ້ສື່ການຮຽນການສອນຝຶກເວົ້າພາສາລາວ ສາມາດຮັບເອົາສື່ດັ່ງກ່າວຈາກ ຫ້ອງການສຶກສາທິການ ແລະ ກິລາເມືອງ ໃນເຂດທ້ອງຖິ່ນຂອງຕົນເອງ ໃນລະຫວ່າງ ຫຼື ຫຼັງຈາກການຝຶກອົບຮົມຄູສອນຝຶກເວົ້າພາສາລາວ.



ຄູຄວນອີງໃສ່ຄູ່ມືຄູເພື່ອສອນທຸກໆບົດຮຽນຝຶກເວົ້າພາສາລາວ. ການສອນອີງໃສ່ພຽງແຕ່ປຶ້ມແບບຮຽນຢ່າງດຽວແມ່ນບໍ່ພຽງພໍ.



ປຶ້ມແບບຮຽນຄວນຖືກແຈກຢາຍໃຫ້ນັກຮຽນເພື່ອເອົາເມືອເຮືອນ ແລະ ພໍ່ແມ່/ຜູ້ປົກຄອງ ຄວນຈະໄດ້ຮັບການປຸກລະດົມກ່ຽວກັບການຮັກສາປຶ້ມແບບຮຽນຢ່າງຖືກຕ້ອງ. ປຶ້ມແບບຮຽນຕ້ອງສົ່ງຄືນໃຫ້ໂຮງຮຽນໃນຕອນທ້າຍຂອງພາກຮຽນ.



ສື່ການຮຽນການສອນເສີມ (ຊຸດເກມ) ຄວນຖືກເກັບຮັກສາໄວ້ຢ່າງປອດໄພຢູ່ໂຮງຮຽນເມື່ອບໍ່ໄດ້ຖືກນຳໃຊ້.



ຄູສອນບົດຮຽນຝຶກເວົ້າພາສາລາວ ຂັ້ນ ປ.1 ທີ່ບໍ່ມີສື່ການຮຽນການສອນພຽງພໍສຳລັບນັກຮຽນຂອງຕົນຄວນຕິດຕໍ່ຫາຫ້ອງການສຶກສາທິການ ແລະ ກິລາເມືອງເພື່ອຂໍການຊ່ວຍເຫຼືອ.

# ຊົ່ວໂມງຮຽນຝຶກເວົ້າພາສາລາວ ມີ 4 ຂັ້ນຕອນ

1 ຂັ້ນນຳເຂົ້າສູ່ບົດຮຽນ

2 ຂັ້ນຈັດກິດຈະກຳການຮຽນ

3 ຂັ້ນຝຶກປະຕິບັດ ແລະ ນຳໃຊ້

4 ຂັ້ນສະຫຼຸບບົດຮຽນ

ຄູບໍ່ຈຳເປັນຕ້ອງຂຽນແຜນການສອນຂອງຕົນເອງສຳລັບບົດຝຶກເວົ້າພາສາລາວ. ແຜນການສອນທັງໝົດມີຢູ່ໃນປຶ້ມຄູ່ມືຄູ. ຄູຄວນອ່ານແຕ່ລະແຜນການສອນ ແລະ ຮັບປະກັນວ່າຄູເຂົ້າໃຈກິດຈະກຳຕ່າງໆກ່ອນທີ່ຈະສອນນັກຮຽນ.



# ການນຳໃຊ້ເກມໃນພາກຜະໜວກຂອງປຶ້ມຄູ່ມືຄູ



ມີຄຳແນະນຳສຳລັບເກມການຮຽນຮູ້ພາສາ 12 ເກມ ຢູ່ໃນພາກຜະໜວກຂອງປຶ້ມຄູ່ມືຄູຝຶກເວົ້າພາສາລາວ. ບາງເກມແມ່ນລວມຢູ່ໃນແຜນການສອນ.

ເກມທີ່ໄດ້ລວມເຂົ້າໃນແຜນການສອນ ແມ່ນເປັນສ່ວນໜຶ່ງຂອງບົດຮຽນທີ່ຈະສອນ.



ຄູຍັງສາມາດຫຼິ້ນເກມຝຶກເວົ້າພາສາລາວກັບນັກຮຽນຂອງຕົນໃນເວລາອື່ນໆ, ຕົວຢ່າງ: ຖ້າເຂົາເຈົ້າມີເວລາຫວ່າງໃນຕອນຕົ້ນ ຫຼື ຕອນທ້າຍຂອງມື້ ເຊິ່ງອາດຈະເປັນກິດຈະກຳທີ່ກະຕຸ້ນນັກຮຽນຫຼັງຈາກອາຫານທ່ຽງ, ເວລາພັກຜ່ອນໃນມື້ຝົນຕົກ ຫຼື ໃນເວລາຮຽນບົດຮຽນຝຶກເວົ້າພາສາລາວເພີ່ມເຕີມ.

# ສື່ການຮຽນການສອນຝຶກເວົ້າພາສາລາວສຳລັບຫ້ອງຄອບ



- ສື່ການຮຽນການສອນຝຶກເວົ້າພາສາລາວ ແມ່ນມີຈຸດປະສົງສຳລັບນັກຮຽນຂັ້ນ ປ.1. ເນື້ອໃນຂອງຫຼັກສູດ ແມ່ນສອດຄ່ອງກັບຫຼັກສູດວິຊາພາສາລາວຂັ້ນ ປ.1.
- ສື່ການຮຽນການສອນຝຶກເວົ້າພາສາລາວ ຈະສະໜອງໃຫ້ສະເພາະນັກຮຽນຂັ້ນ ປ.1 ເທົ່ານັ້ນ. ສື່ດັ່ງກ່າວ ຈະບໍ່ສະໜອງໃຫ້ນັກຮຽນໃນຂັ້ນຮຽນອື່ນເທື່ອໃນຕອນນີ້.



# ສື່ການຮຽນການສອນຝຶກເວົ້າພາສາລາວສຳລັບຫ້ອງຮຽນທີ່ມີນັກຮຽນມາຈາກຫຼາຍກຸ່ມພາສາ

- ສື່ການຮຽນການສອນຝຶກເວົ້າພາສາລາວ ຖືກອອກແບບມາສຳລັບເດັກນ້ອຍທີ່ຍັງບໍ່ສາມາດເວົ້າພາສາລາວເລີຍ ຫຼື ຜູ້ທີ່ເວົ້າພາສາລາວໄດ້ໜ້ອຍຫຼາຍເມື່ອພວກເຂົາເຈົ້າເລີ່ມເຂົ້າໂຮງຮຽນ.
- ຄູສາມາດສອນບົດຝຶກເວົ້າພາສາລາວ ຢູ່ໃນຫ້ອງຮຽນທີ່ນັກຮຽນໃຊ້ພາສາແມ່ໜຶ່ງພາສາ ຫຼື ຫຼາຍກວ່ານັ້ນ.
- ໃນຫ້ອງຮຽນຂັ້ນ ປ.1 ທີ່ມີນັກຮຽນເວົ້າພາສາລາວໄດ້ແລ້ວ, ນັກຮຽນກຸ່ມນີ້ ອາດຈະສາມາດເຂົ້າຮ່ວມຊົ່ວໂມງຝຶກເວົ້າພາສາລາວໄດ້ ຖ້າຫາກຈຳເປັນ. ອີກທາງເລືອກໜຶ່ງ ແມ່ນມອບກິດຈະກຳອື່ນໃຫ້ພວກເຂົາເຈົ້າເຮັດ ຫຼື ສົ່ງເຂົ້າຮ່ວມຮຽນກັບຫ້ອງຮຽນອື່ນ ຫຼື ມີສ່ວນຮ່ວມໃນກິດຈະກຳອື່ນອີງຕາມຄວາມເໝາະສົມກັບສະພາບການ.
- ຖ້ານັກຮຽນທີ່ເວົ້າພາສາລາວໄດ້ແລ້ວ ເຂົ້າຮ່ວມຊົ່ວໂມງຮຽນຝຶກເວົ້າພາສາລາວ, ຄູຄວນຂໍໃຫ້ພວກເຂົາເຈົ້າຊ່ວຍເຫຼືອນັກຮຽນທີ່ຍັງບໍ່ສາມາດເວົ້າພາສາລາວ. ຄູບໍ່ຄວນເນັ້ນບົດຮຽນໃຫ້ນັກຮຽນທີ່ເວົ້າພາສາລາວໄດ້ແລ້ວ.



# ຄູສອນບົດຮຽນຝຶກເວົ້າພາສາລາວ



- ສື່ການຮຽນການສອນຝຶກເວົ້າພາສາລາວ ບໍ່ຈໍາເປັນຕ້ອງນໍາໃຊ້ໂດຍຄູທີ່ເວົ້າພາສາລາວເປັນພາສາຫຼັກ. ສາມາດສອນໄດ້ໂດຍຄູຜູ້ທີ່ສາມາດເວົ້າພາສາລາວໄດ້ ເຖິງວ່າບໍ່ແມ່ນພາສາແມ່ຂອງຕົນກໍຕາມ.
- ສື່ການຮຽນການສອນຝຶກເວົ້າພາສາລາວ ສາມາດນໍາໃຊ້ໂດຍຄູຜູ້ທີ່ສາມາດ ຫຼື ບໍ່ສາມາດເວົ້າພາສາຂອງນັກຮຽນຂອງເຂົາເຈົ້າ. ເຖິງຢ່າງໃດກໍ່ຕາມ, ຄູຊັ້ນ ປ.1 ທີ່ສາມາດເວົ້າພາສາຂອງນັກຮຽນຂອງຕົນໄດ້ແມ່ນຖືວ່າເປັນທັກສະທີ່ມີປະໂຫຍດ.



# ການຊ່ວຍເຫຼືອ/ອຸປະກອນ ສໍາລັບຄູສອນບົດຮຽນຝຶກເວົ້າພາສາລາວ

ຄູສາມາດຊອກຫາຄໍາແນະນໍາກ່ຽວກັບການສອນຝຶກເວົ້າພາສາລາວໃນພາກແນະນໍາລວມຂອງປື້ມຄູ່ມືຄູ ແລະ ໃນແຕ່ລະແຜນການສອນ.

ຄູສາມາດເບິ່ງວິດີໂອສໍາລັບການພັດທະນາຄູ ຫຼື ສາລະຄະດີຄູຕົວແບບໃນຕອນການຊ່ວຍເຫຼືອນັກຮຽນຊົນເຜົ່າ ໂດຍການສະແກນລະຫັດ QR. ໃນວິດີໂອເຫຼົ່ານີ້, ຄູສາມາດຮຽນຮູ້ວິທີການອື່ນໆເພື່ອສະໜັບສະໜູນນັກຮຽນຊົນເຜົ່າໃນຫ້ອງຮຽນຂອງພວກເຂົາເຈົ້າ.

ສາລະຄະດີ
ຄູຕົວແບບທີ 5

ວິດີໂອສໍາລັບ
ການພັດທະນາຄູທີ 20

ຜູ້ເຮັດວຽກສຶກສານິເທດສາມາດຊ່ວຍຄູໄດ້ໂດຍການສັງເກດການສອນຝຶກເວົ້າພາສາລາວຂອງພວກເຂົາເຈົ້າ ແລະ ໃຫ້ຄໍາຄິດເຫັນ, ທົບທວນສື່ການຮຽນການສອນຝຶກເວົ້າພາສາລາວຮ່ວມກັນ ຫຼື ການສອນກິດຈະກໍາຝຶກເວົ້າຕ່າງໆເປັນຄູ່.

ຄູສາມາດອີງໃສ່ປື້ມຄູ່ມືຂອງຜູ້ເຂົ້າຮ່ວມການຝຶກອົບຮົມຝຶກເວົ້າພາສາລາວເພື່ອທົບທວນຄວາມເຂົ້າໃຈຂອງພວກເຂົາເຈົ້າ.

- ຄູສາມາດຍົກຄໍາຖາມ ແລະ ແນວຄວາມຄິດຂອງຕົນກ່ຽວກັບສື່ການຮຽນການສອນຝຶກເວົ້າພາສາລາວ ໃນກຸ່ມວັອດແອັບສື່ການຮຽນການສອນຝຶກເວົ້າພາສາລາວໃນເມືອງຂອງຕົນ.
- ຄູສາມາດຂໍໃຫ້ຜູ້ເຮັດວຽກສຶກສານິເທດເພີ່ມຕົນເອງເຂົ້າໃນກຸ່ມວັອດແອັບ, ຖ້າຫາກຍັງບໍ່ທັນໄດ້ເປັນສະມາຊິກໃນກຸ່ມເທື່ອ.
- ຜູ້ເຮັດວຽກສຶກສານິເທດອາດຈະສາມາດສະໜອງການສະໜັບສະໜູນຄູສອນບົດຮຽນຝຶກເວົ້າພາສາລາວຈາກທາງໄກ ຕົວຢ່າງ: ທາງໂທລະສັບ ຫຼື ຜ່ານກຸ່ມວັອດແອັບ.

ແຜນງານບໍຄວາແມ່ນແຜນງານທີ່ນໍາພາໂດຍລັດຖະບານແຫ່ງ ສປປ ລາວ
ໂດຍການສະໜັບສະໜູນຈາກລັດຖະບານອົດສະຕຣາລີ ແລະ ອົງການ USAID

ຈັດພິມໃນເດືອນພຶດສະພາ ປີ 2024